ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0215 /ອຄ.ກຈພງ
ນະຄອນຫຼວງວຽງຈັນ, ວັນທີ 22 ມິນາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມນະໂຍບາຍການຄ້າຕ່າງປະເທດ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມການສະເໜີຂອງກົມນະໂຍບາຍການຄ້າຕ່າງປະເທດ ແລະ ອີງຕາມການຄົ້ນຄວ້ານຳສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ຫຼັກການທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງກົມນະໂຍບາຍການຄ້າຕ່າງປະເທດເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານຂອງກົມ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດວຽກງານຂອງກົມນະໂຍບາຍການຄ້າຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມນະໂຍບາຍການຄ້າຕ່າງປະເທດ ຂຽນຫຍໍ້: "ກນຄຕ", ພາສາອັງກິດ: "Department of Foreign Trade Policy" ຂຽນຫຍໍ້: "DFTP" ແມ່ນກົມວິຊາການສັງກັດໃນໂຄງປະກອບກົງຈັກການຈັດຕັ້ງຂອງກະຊວງ ແລະ ຢູ່ພາຍໃຕ້ການຊີ້ນຳຂອງຄະນະພັກ ແລະ ຄະນະນຳກະຊວງ.

ກົມນະໂຍບາຍການຄ້າຕ່າງປະເທດ ມີພາລະບົດບາດເປັນເສນາທິການໃຫ້ລັດຖະມົນຕີກະຊວງ ກ່ຽວກັບວຽກງານນະໂຍບາຍການຄ້າຕ່າງປະເທດ, ການເຈລະຈາການຄ້າ ແລະ ການເຊື່ອມໂຍງເສດຖະກິດ ກັບສອງຝ່າຍ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

## ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມນະໂຍບາຍການຄ້າຕ່າງປະເທດ ມີໜ້າທີ່ດັ່ງນີ້:

1. ເປັນເຈົ້າການສ້າງ ແລະ ທົບທວນນະໂຍບາຍການຄ້າຕ່າງປະເທດ ລວມທັງ ຍຸດທະສາດເຈລະຈາການຄ້າຕ່າງປະເທດ ແລະ ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ;
2. ເປັນເຈົ້າການຄົ້ນຄວ້າ, ສ້າງ ແລະ ຕິດຕາມການຈັດຕັ້ງປະຕິບັດລະບຽບການພາຍໃນ ທີ່ຕິດພັນກັບພັນທະສັນຍາການຄ້າ;
3. ເປັນເຈົ້າການຄົ້ນຄວ້າ, ສ້າງ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳທີ່ຕິດພັນກັບວຽກງານການຄ້າທາງເອເລັກໂຕຣນິກຂອງ ສປປ ລາວ ລວມທັງການກຳນົດແຜນຍຸດທະສາດ ແລະ ການເຂົ້າຮ່ວມເຈລະຈາວຽກງານການຄ້າເອເລັກໂຕຣນິກ ໃນຂອບສັນຍາຕ່າງໆ;
4. ເປັນເຈົ້າການຄົ້ນຄວ້າ, ນຳສະເໜີແຜນຍຸດທະສາດ ຂອງ ສປປ ລາວ ແລະ ເຂົ້າຮ່ວມເຈລະຈາສັນຍາການຄ້າກັບຕ່າງປະເທດໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
5. ເປັນເຈົ້າການຄົ້ນຄວ້າກ່ຽວກັບຜົນກະທົບຂອງສັນຍາການຄ້າຕໍ່ເສດຖະກິດ ແລະ ສັງຄົມ ລວມທັງນຳສະເໜີນະໂຍບາຍ ແລະ ມາດຕະການເພື່ອຊ່ວຍໃນການປັບຕົວຂອງພາກທຸລະກິດ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບ;
6. ຕິດຕາມ ແລະ ກວດກາຄວາມສອດຄ່ອງໃນການຈັດຕັ້ງປະຕິບັດສັນຍາການຄ້າຂອງ ສປປ ລາວ ແລະ ປະເທດພາຄີ;
7. ແຈ້ງຂໍ້ມູນກ່ຽວກັບນິຕິກຳທີ່ຕິດພັນກັບວຽກງານການແກ້ໄຂທາງການຄ້າ ໃນຂອບສັນຍາການຄ້າທີ່ ສປປ ລາວ ເປັນພາຄີ ແລະ ເຂົ້າຮ່ວມຕິດຕາມການເຈລະຈາກ່ຽວກັບການແກ້ໄຂທາງການຄ້າພາຍໃຕ້ສັນຍາການຄ້າ;
8. ສະຫຼຸບລາຍງານ ແລະ ເຜີຍແຜ່ຜົນການເຈລະຈາສັນຍາການຄ້າໃນຂອບຕ່າງໆໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ;
9. ປະຕິບັດໜ້າທີ່ເປັນໃຈກາງປະສານງານກັບທີ່ປຶກສາເສດຖະກິດການຄ້າປະຈຳຢູ່ຕ່າງປະເທດ ກ່ຽວກັບວຽກງານເຊື່ອມໂຍງເສດຖະກິດກັບສາກົນ;
10. ປະຕິບັດໜ້າທີ່ເປັນເສນາທິການ ແລະ ເຈົ້າການ ກ່ຽວກັບວຽກງານອົງການການຄ້າໂລກ, ເສົາຄ້ຳປະຊາຄົມເສດຖະກິດອາຊຽນ, ອາຊຽນກັບປະເທດຄູ່ເຈລະຈາ, ສັນຍາການຄ້າອາຊີ-ປາຊີຟິກ ແລະ ສັນຍາການຄ້າອື່ນ ທີ່ ສປປ ລາວ ເປັນພາຄີ;
11. ຍາດແຍ່ງການຊ່ວຍເຫຼືອ ແລະ ສະໜັບສະໜູນຈາກຕ່າງປະເທດລວມທັງ ອົງການຈັດຕັ້ງສາກົນ ໃນວຽກທີ່ຕິດພັນກັບການເຈລະຈາ ແລະ ການຈັດຕັ້ງປະຕິບັດສັນຍາການຄ້າ;
12. ພັດທະນາ ແລະ ຄຸ້ມຄອງ ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ແລະ ສະໜອງຂໍ້ມູນທີ່ຕິດພັນກັບວຽກງານເຊື່ອມໂຍງເສດຖະກິດກັບສາກົນ;
13. ຄົ້ນຄວ້າປະກອບຄຳເຫັນຕາມພາລະບົດບາດຂອງກົມຕໍ່ເອກະສານຕ່າງໆ ທີ່ພາກສ່ວນກ່ຽວຂ້ອງອື່ນໆສະເໜີ;

14. ປະສານ ແລະ ສະໜອງຂໍ້ມູນກ່ຽວກັບວຽກງານເຊື່ອມໂຍງເສດຖະກິດກັບສາກົນ ໃຫ້ແກ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
15. ສຶກສາອົບຮົມ, ກໍ່ສ້າງ ແລະ ຄຸ້ມຄອງ ພະນັກງານພາຍໃນກົມຕາມກົດໝາຍ ແລະ ລະບຽບການຂອງພັກ, ລັດຖະບານ ແລະ ກະຊວງ ວາງອອກ;
16. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະນຳກະຊວງ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 4 ຂອບເຂດສິດ**

ກົມນະໂຍບາຍການຄ້າຕ່າງປະເທດ ມີຂອບເຂດສິດດັ່ງນີ້:

1. ຕາງໜ້າໃຫ້ ສປປ ລາວ ຕາມການມອບໝາຍຂອງຂັ້ນເທິງ ໃນການເຂົ້າຮ່ວມເຈລະຈາການຄ້າ ແລະ ຕິດຕາມການແກ້ໄຂຂໍ້ຂັດແຍ່ງທາງດ້ານການຄ້າ ເພື່ອຜົນປະໂຫຍດ ຂອງ ສປປ ລາວ;
2. ສົ່ງເສີມຄວາມກ້າວໜ້າໃຫ້ແກ່ບຸກຄະລາກອນຂອງກົມບົນພື້ນຖານຄວາມຮູ້ ແລະ ຄວາມສາມາດ, ແນໃສ່ເພື່ອພັດທະນາຄວາມຮູ້ ແລະ ຄວາມສາມາດທີ່ຈຳເປັນໃຫ້ແກ່ບຸກຄະລາກອນຂອງກົມ ແລະ ພະນັກງານສາຍຕັ້ງຢູ່ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສາມາດເຮັດວຽກຢ່າງມີປະສິດທິພາບ;
3. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການຄ້າ ຕາມພາລະບົດບາດ;
4. ນຳໃຊ້ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານທາງລັດຖະການ; ແລະ ນຳໃຊ້ງົບປະມານໂຄງການຊ່ວຍເຫຼືອຂອງຕ່າງປະເທດທີ່ກົມຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ;
5. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍຕ່າງໆ ແລະ ລົງວິໄນຕໍ່ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງກົມ;
6. ສະເໜີແຕ່ງຕັ້ງລັດຖະກອນຂອງກົມ ໃນການໄປເຄື່ອນໄຫວວຽກງານ ແລະ ໄປຍົກລະດັບທັງພາຍໃນ ແລະ ຕ່າງປະເທດ ຕາມພາລະບົດບາດຂອງກົມ;
7. ສະເໜີປັບປຸງກົງຈັກການຈັດຕັ້ງຂອງກົມ, ພ້ອມດ້ວຍ ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ, ພ້ອມທັງ ປັບປຸງ ແລະ ສັບຊ້ອນລັດຖະກອນພາຍໃນກົມ;
8. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ແຈ້ງການ ເພື່ອຄຸ້ມຄອງບໍລິຫານວຽກງານຕາມພາລະບົດບາດຂອງກົມ;
9. ນຳໃຊ້ສິດອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ ຫຼື ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກການຈັດຕັ້ງຂອງກົມນະໂຍບາຍການຄ້າຕ່າງປະເທດ ປະກອບມີ 5 ພະແນກຄື:

1. ພະແນກຮ່ວມມືດ້ານວິຊາການ ແລະ ການຄ້າທາງເອເລັກໂຕຣນິກ

2. ພະແນກການຄ້າຫຼາຍຝ່າຍ
3. ພະແນກເສດຖະກິດພາກພື້ນ ແລະ ອະນຸພາກພື້ນ
4. ພະແນກການຄ້າດ້ານສິນຄ້າ
5. ພະແນກການຄ້າດ້ານບໍລິການ

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງກົມນະໂຍບາຍການຄ້າຕ່າງປະເທດ ປະກອບດ້ວຍ: ຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຕາມການກໍານົດໃນຕໍາແໜ່ງງານຂອງກົມ.

ບຸກຄະລາກອນດັ່ງກ່າວມີຄວາມຮັບຜິດຊອບ ດັ່ງນີ້:

1. ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ ເປັນຜູ້ຮັບຜິດຊອບທັງໝົດ ແລະ ໂດຍກົງຕໍ່ທຸກຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການປະຕິບັດພາລະບົດບາດ, ສິດ, ໜ້າທີ່ ຕາມທີ່ບົ່ງໄວ້ໃນມາດຕາ 2, 3 ແລະ 4 ຂອງຂໍ້ຕົກລົງສະບັບນີ້;
2. ຮອງຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ ເປັນຜູ້ຊ່ວຍວຽກຫົວໜ້າກົມຮັບຜິດຊອບຕໍ່ຜົນໄດ້, ຜົນເສຍໃນວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກົມ; ແລະ
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຮັບຜິດຊອບຕໍ່ຜົນໄດ້, ຜົນເສຍໃນການເຄື່ອນໄຫວວຽກງານຕາມຕໍາແໜ່ງງານຂອງຕົນ.

## ໝວດທີ IV
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງແຕ່ລະພະແນກ**

**7.1 ພະແນກຮ່ວມມືດ້ານວິຊາການ ແລະ ການຄ້າທາງເອເລັກໂຕຣນິກ ມີໜ້າທີ່ດັ່ງນີ້:**

1. ຄົ້ນຄວ້າ, ທົບທວນ, ສະເໜີນະໂຍບາຍ ແລະ ຍຸດທະສາດໃນການເຈລະຈາສັນຍາການຄ້າ ໃນຂອບສອງຝ່າຍ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
2. ເປັນເຈົ້າການຄົ້ນຄວ້າ, ສ້າງ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນພັດທະນາ ແລະ ນິຕິກໍາທີ່ຕິດພັນກັບວຽກງານການຄ້າທາງເອເລັກໂຕຣນິກຂອງ ສປປ ລາວ ລວມທັງ ການກໍານົດຍຸດທະສາດ ແລະ ການເຂົ້າຮ່ວມເຈລະຈາວຽກງານການຄ້າເອເລັກໂຕຣນິກ ໃນຂອບສັນຍາຕ່າງໆໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
3. ເປັນໃຈກາງໃນການສ້າງແຜນ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງດ້ານວິຊາການ ພາຍໃຕ້ຂອບການຮ່ວມມືທາງດ້ານເສດຖະກິດໃນສັນຍາການຄ້າເສລີອາຊຽນ ແລະ ອາຊຽນກັບຄູ່ຮ່ວມເຈລະຈາ ແລະ ໂຄງການກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
4. ຮັບຜິດຊອບເປັນກອງເລຂາຊ່ວຍກົມ ຕິດຕາມ, ຊຸກຍູ້, ເກັບກໍາ ແລະ ສັງລວມເອກະສານຕ່າງໆໃນການຈັດຕັ້ງປະຕິບັດວຽກງານຂອງກົມ;

5. ເປັນໃຈກາງໃນການຄຸ້ມຄອງ ແລະ ພັດທະນາບຸກຄະລາກອນຂອງກົມ ລວມທັງ ຮັບຜິດຊອບການກະກຽມດ້ານເນື້ອໃນເອກະສານ ແລະ ດ້ານໂລຈິສຕິກ ໃນການເປັນເຈົ້າພາບຈັດກອງປະຊຸມສາກົນ;
6. ສ້າງແຜນ, ຄຸ້ມຄອງ ແລະ ສະຫຼຸບການນຳໃຊ້ງົບປະມານ ທີ່ກະຊວງຈັດສັນໃຫ້ ເພື່ອຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບຄວາມຮັບຜິດຊອບຂອງກົມ;
7. ຄົ້ນຄວ້າ ແລະ ສັງລວມຄຳເຫັນຈາກບັນດາພະແນກພາຍໃນກົມຕໍ່ເອກະສານຕ່າງໆທີ່ຕິດພັນກັບວຽກງານຂອງກົມ;
8. ປະສານສົມທົບກັບບັນດາພະແນກພາຍໃນກົມ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອເຜີຍແຜ່ວຽກງານການເຊື່ອມໂຍງເສດຖະກິດກັບສາກົນ ແລະ ວຽກງານອື່ນໆຂອງກົມ;
9. ເປັນເຈົ້າການປະສານກັບພະແນກກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ພັດທະນາສູນຂໍ້ມູນຂ່າວສານຂອງກົມ, ລວມທັງ ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;
10. ສັງລວມ ແລະ ສະໜອງຂໍ້ມູນທີ່ພົວພັນກັບວຽກງານຂອງພະແນກ ແລະ ຂອງກົມ; ແລະ
11. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຫົວໜ້າກົມ.

**7.2 ພະແນກການຄ້າຫຼາຍຝ່າຍ ມີໜ້າທີ່ດັ່ງນີ້:**

1. ຄົ້ນຄວ້າ, ທົບທວນ, ສະເໜີນະໂຍບາຍ ແລະ ຍຸດທະສາດ ໃນການເຈລະຈາສັນຍາການຄ້າຫຼາຍຝ່າຍໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
2. ເປັນເຈົ້າການເຈລະຈາການຄ້າຫຼາຍຝ່າຍໃນຂອບອົງການການຄ້າໂລກ;
3. ແຈ້ງຂໍ້ມູນກ່ຽວກັບນິຕິກຳທີ່ຕິດພັນກັບວຽກງານການແກ້ໄຂທາງການຄ້າ ໃນຂອບສັນຍາທີ່ ສປປ ລາວ ເປັນພາຄີ ແລະ ເຂົ້າຮ່ວມຕິດຕາມການເຈລະຈາກ່ຽວກັບການແກ້ໄຂທາງການຄ້າພາຍໃຕ້ສັນຍາການຄ້າ;
4. ຄົ້ນຄວ້າຄວາມສອດຄ່ອງຂອງຮ່າງລະບຽບການ ແລະ ກົດໝາຍພາຍໃນ ກັບສິດ ແລະ ພັນທະສັນຍາການຄ້າ ທີ່ ສປປ ລາວ ເປັນພາຄີ;
5. ຄົ້ນຄວ້າຄວາມສອດຄ່ອງຂອງມາດຕະການທີ່ຕິດພັນກັບການຄ້າຂອງປະເທດພາຄີ ທີ່ອາດຈະຫຼື ສົ່ງຜົນກະທົບຕໍ່ການສົ່ງອອກ ຫຼື ນຳເຂົ້າຂອງ ສປປ ລາວ ກັບສິດ ແລະ ພັນທະສັນຍາການຄ້າ ທີ່ ສປປ ລາວ ເປັນພາຄີ;
6. ເປັນເຈົ້າການຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນວຽກງານການທົບທວນນະໂຍບາຍການຄ້າຂອງ ສປປ ລາວ ໃນຂອບອົງການການຄ້າໂລກ;
7. ແຈ້ງໃຫ້ກອງເລຂາອົງການການຄ້າໂລກຊາບກ່ຽວກັບ ມາດຕະການ, ລະບຽບການ ຫຼື ກົດໝາຍ ພາຍໃຕ້ພັນທະສັນຍາຂອງອົງການການຄ້າໂລກ ຍົກເວັ້ນການແຈ້ງ ທີ່ໄດ້ລະບຸໄວ້ໃນວັກທີ 7 ແລະ 8 ຂໍ້ 7.4 ແລະ ວັກທີ 4 ຂໍ້ 7.5 ຂອງຂໍ້ຕົກລົງສະບັບນີ້;
8. ເປັນຈຸດປະສານງານກັບສຳນັກງານຜູ້ຕາງໜ້າຖາວອນແຫ່ງ ສປປ ລາວ ປະຈຳຫ້ອງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ ທີ່ ເຈນີວາ, ສະວິດເຊີແລນ ກ່ຽວກັບວຽກງານການຄ້າຫຼາຍຝ່າຍ;
9. ປະສານ ແລະ ພົວພັນກັບກອງເລຂາອົງການການຄ້າໂລກ ແລະ ບັນດາສະມາຊິກອົງການການຄ້າໂລກໃນວຽກງານຕ່າງໆໃນຂອບການຄ້າຫຼາຍຝ່າຍ;

10. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງເພື່ອເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດພັນທະຂອງ ສປປ ລາວ ໃນຂອບການຄ້າຫຼາຍຝ່າຍ;
11. ຮັບຜິດຊອບກົນໄກການຮ່ວມມື ພາຍໃຕ້ຂອບສັນຍາການຄ້າ ແລະ ການລົງທຶນ ລະຫວ່າງ ສປປ ລາວ ກັບ ສະຫະລັດອາເມລິກາ;
12. ເປັນໃຈກາງປະສານງານກ່ຽວກັບວຽກຮ່ວມມື ແລະ ຊ່ວຍເຫຼືອທາງດ້ານວິຊາການໃນຂອບການຄ້າຫຼາຍຝ່າຍ;
13. ສັງລວມ ແລະ ສະໜອງຂໍ້ມູນທີ່ພົວພັນກັບວຽກງານຂອງພະແນກ; ແລະ
14. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຫົວໜ້າກົມ.

**7.3 ພະແນກເສດຖະກິດພາກພື້ນ ແລະ ອະນຸພາກພື້ນ ມີໜ້າທີ່ດັ່ງນີ້:**

1. ຄົ້ນຄວ້າ, ທົບທວນ ແລະ ສະເໜີນະໂຍບາຍ ແລະ ຍຸດທະສາດໃນການເຈລະຈາສັນຍາການຄ້າໃນຂອບພາກພື້ນ ແລະ ອະນຸພາກພື້ນ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
2. ເປັນເຈົ້າການ ແລະ ຈຸດປະສານງານວຽກເສົາຄໍ້າປະຊາຄົມເສດຖະກິດອາຊຽນຂອງ ສປປ ລາວ ໂດຍສະເພາະວຽກພາຍໃຕ້ເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນ, ເຈົ້າໜ້າທີ່ອາວຸໂສລະດັບສູງສະເພາະກິດເພື່ອການເຊື່ອມໂຍງເສດຖະກິດອາຊຽນ, ລັດຖະມົນຕີເສດຖະກິດອາຊຽນ, ສະພາປະຊາຄົມເສດຖະກິດອາຊຽນ, ກອງປະຊຸມປຶກສາຫາລືຮ່ວມ ແລະ ກອງປະຊຸມສຸດຍອດອາຊຽນ ລວມທັງຕິດຕາມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນ ແລະ ແຜນວຽກບູລິມະສິດເສດຖະກິດປະຈຳປີ;
3. ເປັນເຈົ້າການ ແລະ ຈຸດປະສານງານວຽກການເຊື່ອມໂຍງເສດຖະກິດລະຫວ່າງອາຊຽນ ແລະ ປະເທດຄູ່ເຈລະຈາໂດຍສະເພາະວຽກທີ່ຢູ່ພາຍໃຕ້ກອງປະຊຸມສຸດຍອດ, ກອງປະຊຸມປຶກສາຫາລືລັດຖະມົນຕີເສດຖະກິດ, ກອງປະຊຸມປຶກສາຫາລືເຈົ້າໜ້າທີ່ອາວຸໂສເສດຖະກິດ ອາຊຽນ-ຄູ່ເຈລະຈາ, ລວມທັງເປັນເຈົ້າການຊ່ວຍຫົວໜ້າຄະນະເຈລະຈາ/ຫົວໜ້າຄະນະກຳມະການຮ່ວມຂອງ ສປປ ລາວ ໃນການເຈລະຈາ ແລະ ຕິດຕາມການຈັດຕັ້ງປະຕິບັດສັນຍາການຄ້າໃນຂອບອາຊຽນ-ຄູ່ເຈລະຈາ;
4. ເປັນເຈົ້າການຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານພາຍໃຕ້ກອງປະຊຸມລັດຖະມົນຕີ ຂະແໜງການອື່ນໆໃນເສົາຄໍ້າປະຊາຄົມເສດຖະກິດອາຊຽນ ລວມທັງວຽກທີ່ຕິດພັນກັບສາມເສົາຄໍ້າປະຊາຄົມອາຊຽນ ໂດຍສະເພາະແຜນວຽກຂໍ້ລິເລີ່ມວ່າດ້ວຍການເຊື່ອມໂຍງອາຊຽນ ແລະ ແຜນແມ່ບົດການເຊື່ອມຈອດອາຊຽນ;
5. ເປັນເຈົ້າການ ແລະ ຈຸດປະສານງານວຽກພາຍໃຕ້ຂອບຮ່ວມມືເສດຖະກິດພາກພື້ນ ແລະ ອະນຸພາກພື້ນໂດຍສະເພາະ ສັນຍາການຄ້າອາຊີ-ປາຊີຟິກ, ກອງປະຊຸມລັດຖະມົນຕີເສດຖະກິດອາຊີ-ເອີຣົບ, ກອງປະຊຸມລັດຖະມົນຕີເສດຖະກິດ ກຳປູເຈຍ, ລາວ, ມຽນມາ, ຫວຽດນາມ, ກອງປະຊຸມລັດຖະມົນຕີເສດຖະກິດແມ່ນໍ້າຂອງ-ຍີ່ປຸ່ນ ແລະ ຂອບວຽກເພື່ອການພັດທະນາປະເທດກຳປູເຈຍ, ລາວ, ມຽນມາ, ຫວຽດນາມ; ເປັນໃຈກາງໃຫ້ແກ່ກົມໃນການຄົ້ນຄວ້າປະກອບຄຳເຫັນໃນຂອບການຮ່ວມມືອື່ນໆ;

6. ເປັນເຈົ້າການຄົ້ນຄວ້າ ກ່ຽວກັບຂໍ້ສະເໜີຈາກບັນດາສະພາທີ່ປຶກສາທຸລະກິດທີ່ຢູ່ພາຍໃຕ້ຂອບການຮ່ວມມືອາຊຽນ ແລະ ອາຊຽນ-ຄູ່ເຈລະຈາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອນໍາສະເໜີນະໂຍບາຍ ແລະ ມາດຕະການໃຫ້ຂັ້ນເທິງພິຈາລະນາ;
7. ເປັນໃຈກາງປະສານງານກັບສໍານັກງານຜູ້ຕາງໜ້າຖາວອນ ແຫ່ງ ສປປ ລາວ ປະຈໍາອາຊຽນ ແລະ ເຊີແນວ ໃນວຽກງານເຊື່ອມໂຍງເສດຖະກິດອາຊຽນ;
8. ປະສານສົມທົບກັບບັນດາພະແນກພາຍໃນກົມ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນໆ ເພື່ອເຜີຍແຜ່, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດສັນຍາໃນຂອບການຮ່ວມມືເສດຖະກິດອາຊຽນ ແລະ ອາຊຽນກັບຄູ່ຮ່ວມເຈລະຈາ ແລະ ຂອບການຮ່ວມມືອະນຸພາກພື້ນຕ່າງໆ;
9. ສັງລວມ ແລະ ສະໜອງຂໍ້ມູນທີ່ພົວພັນກັບວຽກງານຂອງພະແນກ; ແລະ
10. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຫົວໜ້າກົມ.

**7.4 ພະແນກການຄ້າດ້ານສິນຄ້າ ມີໜ້າທີ່ດັ່ງນີ້:**

1. ຄົ້ນຄວ້າ, ທົບທວນ, ສະເໜີນະໂຍບາຍ ແລະ ຍຸດທະສາດໃນການເຈລະຈາສັນຍາການຄ້າດ້ານສິນຄ້າ ແລະ ອັດຕາພາສີ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
2. ເປັນເຈົ້າການ ຄົ້ນຄວ້າ, ກໍານົດຍຸດທະສາດ ແລະ ເຈລະຈາ ລະບຽບແຫຼ່ງກໍາເນີດສິນຄ້າ, ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຄ້າຊາຍແດນ ພາຍໃຕ້ຂອບການຮ່ວມມືຕ່າງໆ ຂອງສັນຍາທີ່ເລີ່ມເຈລະຈາໃໝ່ ແລະ ການດັດແກ້ສັນຍາ ຈົນເຖິງການໃຫ້ສັດຕະຍາບັນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ເປັນເຈົ້າການເຜີຍແຜ່ເນື້ອໃນຂອງບັນດາສັນຍາການຄ້າດ້ານສິນຄ້າທີ່ໄດ້ຮັບສັດຕະຍາບັນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງເພື່ອນໍາໄປຈັດຕັ້ງຜັນຂະຫຍາຍ;
4. ເປັນເຈົ້າການຄົ້ນຄວ້າ ແລະ ເຈລະຈາບັນຫາທີ່ຕິດພັນກັບມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
5. ຕິດຕາມການຈັດຕັ້ງປະຕິບັດພັນທະຂອງ ສປປ ລາວ ກ່ຽວກັບລະບຽບແຫຼ່ງກໍາເນີດສິນຄ້າ, ການເປີດຕະຫຼາດສິນຄ້າ, ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTMs) ແລະ ວຽກງານການອໍານວຍຄວາມສະດວກທາງດ້ານການຄ້າພາຍໃຕ້ຂອບການຮ່ວມມືຕ່າງໆ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
6. ແຈ້ງໃຫ້ກອງເລຂາອາຊຽນ ແລະ ຂອບສັນຍາອື່ນໆກ່ຽວກັບລະບຽບການ ແລະ ກົດໝາຍທີ່ຕິດພັນກັບການຄ້າດ້ານສິນຄ້າ;
7. ແຈ້ງໃຫ້ກອງເລຂາອົງການການຄ້າໂລກ, ກອງເລຂາອາຊຽນ ແລະ ຂອບສັນຍາອື່ນໆ ກ່ຽວກັບວຽກງານການອໍານວຍຄວາມສະດວກທາງດ້ານການຄ້າ, ສະຖິຕິການນໍາໃຊ້ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ, ຂໍ້ມູນການນໍາເຂົ້າ-ສົ່ງອອກ ແລະ ອັດຕາພາສີ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ເປັນຈຸດປະສານງານ ໃນການແຈ້ງຂໍ້ມູນກ່ຽວກັບສຸຂານາໄມ ແລະ ສຸຂານາໄມພືດ ແລະ ອຸປະສັກດ້ານເຕັກນິກຕໍ່ການຄ້າ ໃຫ້ກອງເລຂາອົງການການຄ້າໂລກ, ກອງເລຂາອາຊຽນ ແລະ ຂອບສັນຍາອື່ນໆ;
9. ເປັນເຈົ້າການຄົ້ນຄວ້າສິດທິພິເສດທາງດ້ານການຄ້າ ລວມທັງຕິດຕາມການຈັດຕັ້ງປະຕິບັດ;

10. ເປັນຈຸດປະສານງານກ່ຽວກັບວຽກງານລະບົບໃຫ້ຄຳປຶກສາການຄ້າດ້ານສິນຄ້າ, ການຄ້າດ້ານບໍລິການ ແລະ ການລົງທຶນອາຊຽນຂອງ ສປປ ລາວ ສະເພາະວຽກການຄ້າດ້ານສິນຄ້າ;
11. ເປັນເຈົ້າການຄົ້ນຄວ້າເນື້ອໃນເອກະສານ ທີ່ຕິດພັນກັບກອງປະຊຸມສະພາເຂດການຄ້າເສລີອາຊຽນ;
12. ເປັນເຈົ້າການປະສານກັບພາກສ່ວນທີ່ກ່ຽວຂ້ອງ ໃນວຽກງານການໂອນຖ່າຍສາລະບານອັດຕາພາສີ (TRS) ແລະ ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ (PSR) ຂອງ ສປປ ລາວ ໃນແຕ່ລະຂອບສັນຍາການຄ້າ;
13. ເປັນໃຈກາງປະສານງານກ່ຽວກັບວຽກຮ່ວມມື ແລະ ຊ່ວຍເຫຼືອທາງດ້ານວິຊາການໃນຂອບການຄ້າດ້ານສິນຄ້າ;
14. ສັງລວມ ແລະ ສະໜອງຂໍ້ມູນທີ່ພົວພັນກັບວຽກງານຂອງພະແນກ; ແລະ
15. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຫົວໜ້າກົມ.

**7.5 ພະແນກການຄ້າດ້ານບໍລິການ ມີໜ້າທີ່ດັ່ງນີ້:**

1. ຄົ້ນຄວ້າ, ທົບທວນ, ສະເໜີນະໂຍບາຍ ແລະ ຍຸດທະສາດໃນການເຈລະຈາສັນຍາການຄ້າດ້ານບໍລິການ ແລະ ການລົງທຶນດ້ານບໍລິການ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
2. ເປັນເຈົ້າການເຈລະຈາສັນຍາການຄ້າດ້ານບໍລິການ ແລະ ການລົງທຶນດ້ານບໍລິການ ຂອງ ສປປ ລາວ ລວມທັງສ້າງຕາຕະລາງພັນທະຜູກພັນດ້ານບໍລິການໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
3. ຕິດຕາມ, ຊຸກຍູ້ ແລະ ສະຫຼຸບການຈັດຕັ້ງປະຕິບັດພັນທະຂອງ ສປປ ລາວ ກ່ຽວກັບການເປີດຕະຫຼາດການຄ້າດ້ານບໍລິການ ແລະ ການລົງທຶນດ້ານບໍລິການຂອງ ສປປ ລາວ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
4. ເປັນຈຸດສອບຖາມກ່ຽວກັບວຽກງານການຄ້າດ້ານບໍລິການ ແລະ ແຈ້ງໃຫ້ກອງເລຂາອົງການການຄ້າໂລກ, ກອງເລຂາອາຊຽນ ແລະ ຂອບສັນຍາອື່ນໆກ່ຽວກັບລະບຽບການ ແລະ ກົດໝາຍທີ່ຕິດພັນກັບສັນຍາການຄ້າດ້ານບໍລິການ ແລະ ການລົງທຶນດ້ານບໍລິການ ທີ່ ສປປ ລາວ ເປັນພາຄີ;
5. ເປັນຈຸດປະສານງານກ່ຽວກັບ ລະບົບໃຫ້ຄຳປຶກສາການຄ້າດ້ານສິນຄ້າ, ການຄ້າດ້ານບໍລິການ ແລະ ການລົງທຶນອາຊຽນຂອງ ສປປ ລາວ ສະເພາະວຽກການຄ້າດ້ານບໍລິການ;
6. ສະໜອງ ຂໍ້ມູນໃຫ້ສູນຂ່າວສານທາງດ້ານການຄ້າດ້ານບໍລິການຂອງ ສປປ ລາວ;
7. ເປັນໃຈກາງປະສານງານກ່ຽວກັບວຽກຮ່ວມມື ແລະ ຊ່ວຍເຫຼືອທາງດ້ານວິຊາການໃນຂອບການຄ້າດ້ານບໍລິການ;
8. ສັງລວມ ແລະ ສະໜອງຂໍ້ມູນທີ່ພົວພັນກັບວຽກງານຂອງພະແນກ; ແລະ
9. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຫົວໜ້າກົມ.

## ໝວດທີ V
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການ

ກົມນະໂຍບາຍການຄ້າຕ່າງປະເທດ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
2. ທຸກການເຄື່ອນໄຫວ ແລະ ແກ້ໄຂວຽກງານ ແມ່ນປະຕິບັດຕາມກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງກະຊວງ, ນຳເອົາແນວທາງນະໂຍບາຍຂອງພັກ, ລັດຖະບານ, ຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

### ມາດຕາ 9 ແບບແຜນວິທີເຮັດວຽກ

ກົມນະໂຍບາຍການຄ້າຕ່າງປະເທດ ເຄື່ອນໄຫວວຽກງານຕາມແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງບັນຫາ ເປັນໝູ່ຄະນະ ແລະ ການມອບສິດປະຈຳການແທນ ຕ້ອງເຮັດເປັນລາຍລັກອັກສອນ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ເຄື່ອນໄຫວວຽກງານບົນພື້ນຖານການປະສານສົມທົບຢ່າງແໜ້ນແຟ້ນ, ມີຄວາມເປັນເອກະພາບພາຍໃນກົມ ແລະ ລະຫວ່າງກົມນະໂຍບາຍການຄ້າຕ່າງປະເທດກັບບັນດາພາກສ່ວນກ່ຽວຂ້ອງພ້ອມທັງຫັນລົງຮາກຖານຕາມພາລະບົດບາດ; ແລະ
4. ມີການຕິດຕາມ, ກວດກາ, ປະເມີນຜົນ, ຊຸກຍູ້, ສົ່ງເສີມ ແລະ ສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະ, ປະຕິບັດລະບອບປະຊຸມ, ລາຍງານ, ສ່ອງແສງ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ.

## ໝວດທີ VI
## ການຈັດຕັ້ງປະຕິບັດ

### ມາດຕາ 10 ງົບປະມານ ແລະ ຕາປະທັບ

ກົມນະໂຍບາຍການຄ້າຕ່າງປະເທດ ມີງົບປະມານ ແລະ ກາຈ້ຳປະທັບ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ.

### ມາດຕາ 11 ການຈັດຕັ້ງປະຕິບັດ

ກົມນະໂຍບາຍການຄ້າຕ່າງປະເທດ, ບັນດາກົມອ້ອມຂ້າງກະຊວງ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ, ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມນະໂຍບາຍການຄ້າຕ່າງປະເທດ ສະບັບເລກທີ 0766/ອຄ.ກຈພງ, ລົງວັນທີ 12 ມິຖຸນາ 2018.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ